# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 9 ເມສາ 2017 (4-9-2017)

---

## ແບ່ງປັນຊັຍຊະນະ

*ຄຳໂຄສະນາຂາຍຂອງອັນໃດທີ່ທ່ານຈື່ຈຳໄດ້ຢູ່ສເມີ?*

**ຈຸດສຳຄັນໃນບົດຮຽນ**: ຊັຍຊະນະທີ່ພວກເຮົາມີໃນພຣະເຢຊູແມ່ນໃຫຍ່ຫຼວງເກີນໄປທີ່ຈະເກັບເອົາໄວ້ສຳລັບພວກເຮົາເອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກຢູ່ໃນວົງການໂຄສະນານັ້ນແມ່ນສ້າງຄຳຂວັນທີ່ມີຄວາມໝາຍເຈາະຈົງຕໍ່ສິນຄ້າຂອງຕົນ ເພື່ອໃຫ້ຄົນຈື່ຈຳໄວ້ໄດ້ຫຼາຍປີ. ຕົວຢ່າງ: ປີ 1960, ເອົາເສືອໄວ້ໃນຖັງນ້ຳມັນ; ປີ 1970, ມັນແມ່ນຂອງແທ້; ປີ 1980 ຊີ້ນຢູ່ໃສ?; ປີ 1990 ລົງມືເຮັດໂລດ. ຂ້າພະເຈົ້າໄດ້ເຮັດຄຳໂຄສະນາທີ່ມີຄວາມນິຍົມໃນຫ້ອງຕລາດດ້ວຍຕົວເອງ ເພາະວ່າຂ້າພະເຈົ້າເປັນພໍ່ຕູ້ແລ້ວ. ແມ່ນແລ້ວ, ຂ້າພະເຈົ້າເປັນພໍ່ຕູ້ສມັຍໃໝ່. ຂ້າພະເຈົ້າພະຍາຍາມເຮັດທຸກໆຄຳສົນທະນາໃຫ້ເບັດໄປຫາເຣື່ອງຂອງພວກຫຼານ. ຂ້າພະເຈົ້າກໍຊ່ວຍຫຍັງບໍ່ໄດ້! ຂ່າວນີ້ມັນດີເຫຼືອເກີນທີ່ຈະເກັບໄວ້ສະເພາະຕົວເອງ.

ໃນຂ່າວປະເສີດ ທ່ານລູກາໄດ້ກ່າວເຖິງເຣື່ອງລາວອັນສຸດທ້າຍກ່ຽວກັບພຣະເຢຊູກັບພວກສາວົກຂອງພຣະອົງ. ພຣະເຢຊູໄດ້ເຕືອນພວກສາວົກຂອງພຣະອົງວ່າເຂົາເຈົ້າໄດ້ເປັນພະຍານຂອງຫຼາຍໆເຫດການທີ່ຍິ່ງໃຫຍ່. ສິ່ງທີ່ພຣະເຢຊູໄດ້ກະທຳລ້ວນແລ້ວແຕ່ເປັນຂ່າວດີໆທັງນັ້ນ, ແລະກໍເໝືອນກັບຂ່າວດີອື່ນໆ, ເຣື່ອງລາວຂອງການໄຖ່ບາບໃນພຣະເຢຊູຈຳເປັນຕ້ອງໄດ້ປ່າວປະກາດ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ທີ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ລູກາ 24:44-45</u>:**

*44 ພຣະອົງຊົງກ່າວແກ່ເຂົາວ່າ, "ນີ້ແຫຼະ, ຄືຖ້ອຍຄຳຂອງເຮົາ ຊຶ່ງເຮົາໄດ້ບອກໄວ້ແກ່ທ່ານທັງຫຼາຍ ເມື່ອເຮົາຍັງຢູ່ກັບພວກທ່ານວ່າບັນດາຄຳທີ່ຂຽນໄວ້ເຖິງເຮົາໃນບັນຍັດຂອງໂມເຊ ໃນຄັມພີຂອງພວກຜູ້ປະກາດພຣະທັມ ແລະໃນຄັມພີເພງສັຣເສີນນັ້ນຈຳເປັນຈະຕ້ອງສຳເຣັດ." 45 ເມື່ອນັ້ນພຣະອົງໄດ້ຊົງບັນດົນຈິດໃຈຂອງເຂົາ ເພື່ອໃຫ້ເຂົາເຂົ້າໃຈພຣະຄັມພີ.*

ຖ້າຈະເວົ້າວ່າພວກສາວົກຂອງພຣະເຢຊູຕົກຕະລຶງໂດຍເຣື່ອງການຄຶງໄວ້ທີ່ໄມ້ກາງແຂນນັ້ນ ມັນອາດຈະເປັນການຕີລາຄາຕ່ຳເກີນໄປ. ເຖິງປານນັ້ນ, ເມື່ອພຣະເຢຊູໄດ້ປາກົດຕໍ່ພວກທີ່ຕິດຕາມພຣະອົງໃນວັນແຫ່ງການຄືນພຣະຊົນ

ຂອງພຣະອົງ, ພຣະອົງໄດ້ເຕືອນເຂົາເຈົ້າກ່ຽວກັບຄຳເຕືອນຂອງພຣະອົງທີ່ໄດ້ກ່າວມາແລ້ວນັ້ນ "ນີ້ແຫຼະ, ຄືຖ້ອຍຄຳຂອງເຮົາ ຊຶ່ງເຮົາໄດ້ບອກໄວ້ແກ່ທ່ານທັງຫຼາຍ ເມື່ອເຮົາຍັງຢູ່ກັບພວກທ່ານ."

ພຣະເຢຊູໄດ້ບອກພວກສາວົກເລື້ອຍໆວ່າພຣະອົງຈະຕ້ອງຖືກຈັບ, ຖືກຂ້າ, ແລະຈະຟື້ນຄືນມາຈາກຕາຍ(ເບິ່ງ 9:22,44; 17:25; 18:31933; 22:37). ນອກຈາກນັ້ນ, ພຣະຄັມພີພາສາເຮັບເຣີເອງ (ທີ່ພວກເຮົາເອີ້ນກັນວ່າພາກພຣະສັນຍາເດີມ) ໄດ້ທຳນວາຍໄວ້ວ່າສິ່ງນີ້ຕ້ອງເກີດຂຶ້ນ.

ເຖິງຢ່າງໃດກໍຕາມ, ພຣະເຢຊູກໍບໍ່ໄດ້ຕິຕຽນພວກສາວົກທີ່ຄິດບໍ່ອອກກ່ຽວກັບເລື່ອງນີ້. ແທນທີ່, "ພຣະອົງໄດ້ຊົງບັນດົນຈິດໃຈຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າເຂົ້າໃຈພຣະຄັມພີ." ພຣະເຢຊູແບ່ງແຍກພຣະຄັມພີພາສາເຮັບເຣີເປັນສາມຕອນ:

- **ກົດບັນຍັດຂອງໂມເຊ.** ພຣະຄັມພີຫ້າເຫຼັ້ມທຳອິດໃນພາກພຣະສັນຍາເດີມ, ຍັງໄດ້ຖືກເອີ້ນວ່າ ເພັນຕາຕູສ.
- **ພວກຜູ້ທຳນວາຍ.** ນີ້ລວມທັງ "ຜູ້ທຳນວາຍລຸ້ນກ່ອນ" ໂຢຊວຍເຖິງກະສັດທີ 2 ແລະ "ຜູ້ທຳນວາຍລຸ້ນຫຼັງ" ເອຊາຢາເຖິງມາລາກີ.
- **ເພງສັຣເສີນ.** ພາກສ່ວນນີ້ໄດ້ຖືກເອີ້ນວ່າ "ກາບກອນ," ຊຶ່ງປະກອບດ້ວຍພຣະຄັມພີທຸກເຫຼັ້ມຂອງພາກພຣະສັນຍາເດີມທີ່ບໍ່ໄດ້ກ່າວໃນຂ້າງເທິງນີ້.

ພຣະເຢຊູໄດ້ເປີດໃຈພວກສາວົກໃຫ້ເຫັນເຖິງພຣະຄຳເຫຼົ່ານີ້ ຊຶ່ງເປັນພຣະຄຳທີ່ພວກຢິວທຸກຄົນຮູ້ຈັກດີ ທີ່ເປັນເຣື່ອງກ່ຽວກັບພຣະອົງໂດຍຕົງ.

**ນີ້ບໍ່ແມ່ນຄັ້ງທຳອິດທີ່ພຣະເຢຊູໄດ້ກ່າວເຖິງເຣື່ອງນີ້. ເມື່ອກ່ອນນັ້ນ, ພຣະເຢຊູໄດ້ບອກພວກຢິວທີ່ກຳລັງຂົ່ມເຫັງພຣະອົງ**ວ່າ: "ທ່ານທັງຫຼາຍຄົ້ນຫາໃນພຣະທັມຄັມພີ ເພາະພວກທ່ານຄຶດວ່າໃນພຣະທັມຄັມພີນັ້ນມີຊີວິດອັນຕລອດໄປເປັນນິດ ແມ່ນພຣະຄັມພີນັ້ນແຫຼະ, ເປັນພຍານໃຫ້ແກ່ເຮົາ."(ໂຢຮັນ 5:39).

ໜ້າເສັຽໃຈ, ພວກເຮົາຍັງພົບຫຼາຍໆຕົວຢ່າງຂອງຄົນທີ່ແປພຣະຄັມພີຜິດຫຼືເລືອກທີ່ຈະອ່ານໃຫ້ເປັນໄປຕາມທີ່ຕົນຕ້ອງການຢາກຈະເວົ້າ. ພວກເຮົາຈະຮູ້ໄດ້ແນວໃດວ່າເມື່ອໃດທີ່ພວກເຮົາອ່ານພຣະຄັມພີຢ່າງຖືກຕ້ອງ? ຈົ່ງຊອກຫາພຣະຄຣິດ. ການອ່ານພຣະຄັມພີທີ່ພຣະເຈົ້າຕັ້ງພຣະທັຍເອົາໄວ້ຈະນຳພວກເຮົາກັບມາຫາພຣະເຢຊູສເມີ.

| |
|---|
| ແມ່ນຫຍັງທີ່ທ່ານໃຊ້ເປັນເຄື່ອງມືທີ່ເຮັດໃຫ້ທ່ານມີສ່ວນແລະເຂົ້າໃຈພຣະຄັມພີ? |

## 2. <u>ລູກາ 24:46-47</u>:

*46 ພຣະອົງຊົງກ່າວແກ່ເຂົາວ່າ, "ມີຄຳຂຽນໄວ້ຢ່າງນີ້ ພຣະຄຣິດຈະຕ້ອງຊົງທົນທຸກທໍຣະມານ ແລະຊົງເປັນຄືນມາຈາກຕາຍໃນວັນຖ້ວນສາມ. 47 ແລະຈະຕ້ອງປະກາດທົ່ວທຸກປະເທດໃນພຣະນາມຂອງພຣະອົງໃຫ້ຖິ້ມໃຈເກົ່າເອົາໃຈໃໝ່ຮັບການຍົກບາບໂທດ ຕັ້ງແຕ່ກຸງເຢຣູຊາເລັມໄປ.*

ພຣະຄັມພີພາສາເຮັບເຣີບໍ່ພຽງແຕ່ຊີ້ບອກເຖິງພຣະເມຊີອາແຕ່ພຽງເທົ່ານັ້ນ. ໃນພາກພຣະສັນຍາເດີມຍັງຊີ້ບອກວ່າພຣະອົງຈະກະທຳຫຍັງແດ່ "ພຣະເມຊີອາຈະຕ້ອງທົນທຸກທໍຣະມານແລະຟື້ນຄືນມາຈາກຕາຍໃນວັນຖ້ວນສາມ."

ລູກາບໍ່ໄດ້ບອກພວກເຮົາວ່າໃນພຣະຄຳຂໍ້ໃດທີ່ພຣະເຢຊູມີຄວາມຄິດດັ່ງນັ້ນ, ແຕ່ວ່າພວກເຮົາຮູ້ໄດ້ຈາກຄຣິສຕະຈັກໃນສມັຍເລີ້ມຕົ້ນວ່າໄດ້ໃຊ້ພຣະຄຳຫຼາຍໆຂໍ້ ຊີ້ໃຫ້ເຫັນເຖິງການຖືກຄຶງໄວ້ທີ່ໄມ້ກາງແຂນ ແລະການຟື້ນຄືນຊີວິດຂອງພຣະຄຣິດ. ຕົວຢ່າງ, ທ່ານຟີລິບໄດ້ໃຊ້ພຣະຄັມພີ ເອຊາຢາ 53:7-8 ເພື່ອຊ່ວຍຄົນເອທີໂອເປັຽໃຫ້ພົບກັບພຣະເຢຊູ (ເບິ່ງກິຈການ 8:26-38). ຫຼື ອ່ານເພງສັຣເສີນ 22 ແລະໃຫ້ເບິ່ງຫຼາຍໆຂໍ້ທີ່ສາມາດຊີ້ໃຫ້ເຫັນເຖິງການຖືກຄຶງຕາຍ.

ພາກພຣະສັນຍາເດີມບໍ່ພຽງແຕ່ຊີ້ໄປຂ້າງໜ້າເຖິງເຫດການຂອງຊີວິດພຣະເຢຊູແຕ່ພຽງເທົ່ານັ້ນ, ແຕ່ວ່າຍັງຊີ້ໃຫ້ເຫັນສ່ວນເລິກຂອງຜົນປະໂຫຍດອັນຍິ່ງໃຫຍ່ຕໍ່ຊີວິດຂອງພວກເຮົານຳອີກດ້ວຍ ຕົວຢ່າງ, ມີບາງຄົນຢາກຈະເຫັນຄວາມແຕກຕ່າງລະຫວ່າງພຣະເຈົ້າແຫ່ງຄວາມໂກດຮ້າຍແລະພິພາກສາໃນພາກພຣະສັນຍາເດີມແລະພຣະເຈົ້າແຫ່ງຄວາມຮັກແລະອະພັຍໂທດໃນພາກພຣະສັນຍາໃໝ່. ແຕ່ວ່າພາກພຣະສັນຍາໃໝ່ຍັງຊີ້ໃຫ້ເຫັນພຣະເຈົ້າແຫ່ງຄວາມບໍຣິສຸດທີ່ພິພາກສາຄວາມຜິດບາບ, ເໝືອນກັບພາກພຣະສັນຍາເດີມທີ່ໃຫ້ຄຳພະຍານຢ່າງຫຼວງຫຼາຍຂອງພຣະເຈົ້າແຫ່ງພຣະຄຸນ, ຄວາມຮັກ, ແລະການອະພັຍໂທດບາບ.

| |
|---|
| *ທ່ານສລຸບເຣື່ອງຍິ່ງໃຫຍ່ສຳຄັນແນວໃດຈາກພຣະຄັມພີ ສຳລັບຜູ້ທີ່ບໍ່ເຊື່ອ?* |

**ຕົວຢ່າງ**:

- "ຟ້າສວັນສູງເໜືອແຜ່ນດິນໂລກຫຼາຍເທົ່າໃດ ຄວາມຮັກທີ່ພຣະອົງຊົງມີແກ່ຜູ້ທີ່ຢຳເກງພຣະອົງກໍສູງຫຼາຍເທົ່ານັ້ນ. ທິດຕາເວັນອອກໄກຈາກທິດຕາເວັນຕົກຫຼາຍເທົ່າໃດ ພຣະອົງກໍຊົງຍົກຄວາມບາບຂອງພວກເຮົາອອກໄປໄກຫຼາຍເທົ່ານັ້ນ." (ເພງສັຣເສີນ 183:11-12).
- "ເພາະຂ້າພຣະອົງຮູ້ດີວ່າ ພຣະອົງເປັນພຣະເຈົ້າຜູ້ປະກອບໄປດ້ວຍພຣະມະຫາກະຣຸນາທິຄຸນ ແລະເມດຕາປານີ ບໍ່ຄ່ອຍຊົງພິໂຣດ ຊົງພ້ອມຢູ່ສເມີທີ່ຈະປ່ຽນພຣະທັຍແລະບໍ່ລົງໂທດຜູ້ໃດ" (ໂຢນາ 4:2).

ຂ່າວປະເສີດເປັນເຣື່ອງເກົ່າແກ່. ຈາກຕອນເລີ້ມຕົ້ນ, ພຣະເຈົ້າໄດ້ກະທຳການຜ່ານຄົນຫຼາຍໆລຸ້ນຈົນກວ່າເຖິງເວລາອັນເໝາະສົມໃນປວັດສາດ ພຣະເຢຊູຄຣິດຈຶ່ງໄດ້ມາບັງເກີດ. ການຮູ້ຈັກເຊັ່ນນີ້, ພວກເຮົາເຫັນວ່າ, ການທີ່ພຣະເຢຊູຖືກຈັບກຸມແລະເອົາໄປຂ້າເສັຽຈຶ່ງບໍ່ແມ່ນເຫດການອັນໜ້າສັງເວດ. ແຕ່ແມ່ນເປັນພາກສ່ວນໃນແຜນການອັນສົມບູນຂອງພຣະເຈົ້າ.

ພຣະເຢຊູໄດ້ເຮັດໃຫ້ເຫັນວ່າທຸກໆຄຳສັນຍາຂອງພຣະເຈົ້າຈະໄດ້ສຳເຣັດຢ່າງສົມບູນ. ທ່ານຮູ້ຄຳສັນຍາຕ່າງໆຂອງພຣະເຈົ້າໃນພຣະຄຳຂອງພຣະອົງບໍ່? ທ່ານສາມາດອະທິບາຍວ່າພຣະເຢຊູໄດ້ເຮັດໃຫ້ຄຳສັນຍາຕ່າງໆນັ້ນຄົບສົມບູນຢ່າງໃດ? ຂ້າພະເຈົ້າຫວັງວ່າທ່ານຄົງເຮັດໄດ້. ໃນຖານະເປັນຜູ້ທີ່ຕິດຕາມພຣະຄຣິດ, ພວກເຮົາຄວນຮູ້ຈັກຄຳຕອບຕໍ່ຄຳຖາມເຫຼົ່ານີ້ໂດຍເຫດຜົນທີ່ງ່າຍໆນີ້: ບ່ອນທຳງານຂອງພຣະເຢຊູໃນປວັດສາດແມ່ນການປ່ຽນແປງຂອງໂລກ, ຊີວິດການປ່ຽນແປງຈຶ່ງຕ້ອງຮັບເອົາໄວ້ ແລະປະກາດໃຫ້ຄົນອື່ນຮູ້.

| |
|---|
| *ແມ່ນຫຍັງຄືພື້ນຖານຕ່າງໆຂອງຂ່າວປະເສີດທີ່ຄຣິສຕຽນທຸກຄົນສາມາດແບ່ງປັນ?* |

### 3. <u>ລູກາ 24:48-49</u>:

*48 ຝ່າຍທ່ານທັງຫຼາຍເປັນພຍານໃນການທັງຫຼາຍນັ້ນ. 49 ແລະເບິ່ງແມ, ອັນທີ່ພຣະບິດາຂອງເຮົາໄດ້ຊົງສັນຍາໄວ້ນັ້ນ ເຮົາກໍໃຊ້ມາເຖິງທ່ານທັງຫຼາຍ ແຕ່ຝ່າຍພວກທ່ານຈົ່ງຄອຍຢູ່ໃນກຸງ ຈົນກວ່າພວກທ່ານຈະໄດ້ປະກອບດ້ວຍຣິດເດດທີ່ມາຈາກເບື້ອງເທິງ."*

ພຣະເຢຊູໄດ້ສົ່ງພວກສາວົກໃຫ້ອອກໄປປະກາດຂ່າວປະເສີດໃນຖານະເປັນພະຍານ, ແຕ່ວ່າພຣະອົງບໍ່ໄດ້ສົ່ງເຂົາເຈົ້າອອກໄປຜູ້ດຽວ. ໃນຄືນທີ່ພຣະອົງຖືກຈັບກຸມຕົວ, ພຣະເຢຊູໄດ້ໃຫ້ສັນຍາວ່າພຣະວິນຍານບໍຣິສຸດຈະສະເດັດມາ: "ຝ່າຍເຮົາຈະທູນຂໍພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ອຍອີກຜູ້ນຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານ

ຕລອດໄປເປັນນິດ.  ພຣະອົງເປັນພຣະວິນຍານແຫ່ງຄວາມຈິງ..."(ໂຢຮັນ 14:16-17). ທີ່ເອີ້ນວ່າ"ຜູ້ຊ່ອຍອີກຜູ້ນຶ່ງ," ພຣະເຢຊູໄດ້ໃຊ້ຄຳເວົ້າທີ່ມີຄວາມໝາຍຕົງໆວ່າຄືກັບບາງຄົນທີ່ເດີນຄຽງຂ້າງກັບອີກຄົນອື່ນ. ພຣະວິນຍານບໍຣິສຸດອົງນີ້ຈະເລົ້າໂລມພວກສາວົກ, ຈະອະທິບາຍຄຳສອນຂອງພຣະເຢຊູແລະນຳພາພວກສາວົກໃນວຽກງານຮັບໃຊ້ພຣະເຈົ້າ ແລະການເທສນາຂອງເຂົາເຈົ້າ.

ທີ່ທ່ານແລະຂ້າພະເຈົ້າໄດ້ກ້າວເຂົ້າມາເປັນພະຍານ. ພາຍໃຕ້ການຊົງນຳຂອງພຣະວິນຍານ, ພວກເຮົາໄດ້ຖືກນຳເຂົ້າສູ່ຊີວິດຂອງຄົນອື່ນໆໃນເວລາອັນເໝາະສົມ. ເໝືອນດັ່ງການເກີດຂອງພຣະເຢຊູທີ່ສຳເຣັດຕາມກຳນົດນັ້ນ(ຄາລາເຕັຽ 4:4), ພຣະເຈົ້ານຳພາທ່ານແລະຂ້າພະເຈົ້າເຂົ້າສູ່ຊີວິດຂອງຄົນອື່ນໆຕົງເວລາພໍດີທີ່ຈະເຮັດໃຫ້ມີຄວາມແຕກຕ່າງເກີດຂຶ້ນ.  ຈາກນັ້ນ, ບາງທີກໍອາດເລີ້ມຕົ້ນດ້ວຍການດື່ມກາເຟຫຼືເວົ້າຫຼີ້ນໆກ່ຽວກັບເກມກິລາ,  ພວກເຮົາຟັງເຣື່ອງລາວຂອງເຂົາເຈົ້າ. ຂະນະຢູ່ທີ່ບ່ອນເຂົາເຈົ້າຢູ່ນັ້ນ, ພວກເຮົາກໍເລີ້ມບອກເຂົາເຈົ້າເຖິງເຣື່ອງຂອງພຣະເຢຊູ.  ພວກເຮົາບອກທຸກສິ່ງທຸກຢ່າງທີ່ໄດ້ເກີດຂຶ້ນກັບພຣະເຢຊູ  ແລະກ່ຽວກັບຊັຍຊະນະຂອງພຣະອົງທີ່ມີຄວາມໝາຍຕໍ່ພວກເຮົາທຸກຄົນ. ຢ່າເກັບຂ່າວດີນີ້ໄວ້ສຳລັບຕົວທ່ານເອງ. ຈົ່ງແບ່ງປັນພຣະເຢຊູ ແລະໃຫ້ຄົນອື່ນໆປະສົບກັບຊັຍຊະນະເໝືອນກັນ.

| |
|---|
| *ສະຖານທີ່ໃດທີ່ພຣະເຈົ້າໄດ້ຮຽກເອີ້ນທ່ານໃຫ້ເປັນຕົວແທນຂອງພຣະອົງ?* |

## <u>ນຳໃຊ້ໃນຊີວິດ</u>:

ທ່ານຈະແບ່ງປັນຂ່າວປະເສີດເຣື່ອງຊັຍຊະນະຂອງພຣະຄຣິດແນວໃດໃນອາທິດນີ້? ສເນີໃຫ້ເຮັດຕາມຄຳແນະນຳຂ້າງລຸ່ມນີ້:

- **ເຊື້ອເຊີນ.** ອະທິຖານເພື່ອຫາໂອກາດໃນການເຊື້ອເຊີນໝູ່ເພື່ອນຫຼືສະມາຊິກໃນຄອບຄົວໃຫ້ໄປຮ່ວມນະມັສການທີ່ໂບດ.  ເລີ້ມຕົ້ນງ່າຍໆໂດຍການເຊື້ອເຊີນໃຫ້ມາຮ່ວມນຳທ່ານໃນກຸ່ມສຶກສາພຣະຄັມພີຫຼືນະມັສການໃນອາທິດຕໍ່ໄປ.

- **ສຶກສາຮ່ຳຮຽນ.** ວາງແຜນການອ່ານພາກພຣະສັນຍາເດີມພາຍໃນຫຼາຍໆເດືອນຂ້າງໜ້າ. ຂະນະທີ່ທ່ານກຳລັງອ່ານໃຫ້ສັງເກດເບິ່ງເຄື່ອງໝາຍຕ່າງໆ,  ເຫດການຕ່າງໆ,  ແລະການສອນໃນຈຸດທີ່ຊີ້ໄປຫາການສະເດັດມາຂອງພຣະຄຣິດ.

- **ແບ່ງປັນ.** ໃນຖານະການເປັນກຸ່ມກ້ອນ, ວາງແຜນເຫດການທີ່ສະມາຊິກທຸກຄົນສາມາດນຳພາແຂກຂອງແຕ່ລະຄົນ ຕ້ອງວາງແຜນຢ່າງລະອຽດໃນເຫດການນີ້ເພື່ອໃຫ້ສະມາຊິກຄົນນຶ່ງຫຼືຫຼາຍກວ່ານັ້ນໄດ້ແບ່ງປັນຄວາມເຊື່ອໃນພຣະຄຣິດຂອງເຂົາເຈົ້າ.

ໃນຖານະໂບດ, ພວກເຮົາບໍ່ຈຳເປັນຕ້ອງໃຫ້ເໝືອນກັບຄຳໂຄສະນາສິນຄ້າຫຼືໃຫ້ປັ່ນປ່ວນຕລາດການຄ້າໃນການເຜີຍແຜ່ຂ່າວປະເສີດ.  ແທນທີ່ຈະເຮັດແນວນັ້ນ,  ພວກເຮົາແຕ່ລະຄົນແບ່ງປັນແບບງ່າຍໆກ່ຽວເຣື່ອງຊີວິດທີ່ຖືກປ່ຽນແປງໂດຍຜ່ານຊັຍຊະນະແລະພລັງຂອງພຣະເຢຊູ ຊຶ່ງຄືກັນກັບເຣື່ອງຂອງທ່ານເອງ.